ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 1779 /ອຄ.

ນະຄອນຫຼວງວຽງຈັນ, ວັນທີ 23 OCT 2008

# ແຈ້ງການ

## ກ່ຽວກັບການຈັດຕັ້ງປະຕິບັດ ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້

**ເຖິງ:** ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/ສພຊ, ລົງວັນທີ່ 3/4/99, ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ເລກທີ່ 0221/ອຄ, ລົງວັນທີ່ 13/2/07 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ່ 1301/ອຄ, ລົງວັນທີ່ 30/7/07.
- ອີງຕາມ ຂໍ້ 12 ແລະ ຂໍ້ 28 ຂອງຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ເລກທີ 17/ນຍ, ລົງວັນທີ່ 22/9/08.

ໂດຍປະຕິບັດຕາມຂໍ້ 12.1 ຂອງຄຳສັ່ງນາຍົກລັດຖະມົນຕີ ເລກທີ 17/ນຍ, ລົງວັນທີ່ 22/9/08 ກ່ຽວກັບການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ສຳເລັດຜົນຕາມລະດັບຄາດໝາຍ, ຖືກຕ້ອງຕາມທິດຂອງລັດຖະບານ, ໂດຍສອດຄ່ອງກັບລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ. ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກແຈ້ງການໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສືບຕໍ່ປະຕິບັດ ດັ່ງນີ້:

1/. ໃຫ້ສືບຕໍ່ປະຕິບັດວຽກງານການດັດສົມບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກປະເພດ, ທຸກລະດັບ ທີ່ຕັ້ງຢູ່ພາຍໃນແຂວງຂອງຕົນ ໃຫ້ສຳເລັດຜົນໂດຍໄວ, ມີຄວາມເດັດຂາດ ແລະ ຂາດຕົວ.

2/. ໃຫ້ແຕ່ງຕັ້ງຄະນະວິຊາການຂອງພະແນກ ລົງສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ລົງກວດກາຄືນ ບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ທັງໝົດ ຕາມບັນຊີຜົນການດັດສົມໂຮງງານຕັ້ງຜ່ານມາ. ໂດຍອີງໃສ່ບົດບັນທຶກການກວດກາ ແລະ ສັນຍາການປັບປຸງໂຮງງານ ລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າ ກັບ ບັນດາເຈົ້າຂອງໂຮງງານ.

3/. ສຳຫຼັບໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຢູ່ໃນບັນຊີຖືກປັບປຸງໂຮງງານ. ໃນກໍລະນີຫາກປັບປຸງສຳເລັດ, ໄດ້ຜ່ານການລົງກວດກາແລ້ວ ແລະ ເຫັນວ່າ ຖືກຕ້ອງຕາມມາດຕະຖານ ທີ່ກຳນົດໄວ້ໃນຂໍ້ຕົກລົງເລກທີ 0221/ອຄ, ໃຫ້ແນະນຳໂຮງງານປະກອບເອກະສານ ເພື່ອຂໍອະນຸຍາດດຳເນີນກິດຈະການໂຮງງານ ແລະ ພິຈາລະນາອອກໃບອະນຸຍາດໃຫ້ ຕາມຂໍ້ຕົກລົງເລກທີ່ 1301/ອຄ.

- ໃນກໍລະນີໂຮງງານໄດ້ປັບປຸງແລ້ວ ແຕ່ຍັງບໍ່ທັນສຳເລັດຕາມແຜນທີ່ໄດ້ກຳນົດໄວ້ໃນສັນຍາການປັບປຸງນັ້ນ, ໃຫ້ແນະນຳໂຮງງານເຮັດແຜນການປັບປຸງລະອຽດຄືນໃໝ່ ແລະ ສືບຕໍ່ປັບປຸງໃຫ້ສຳເລັດ. ໃນນີ້, ໄລຍະການປັບປຸງ ໂຮງງານຕ້ອງຢຸດເຊົາຊົ່ວຄາວ ແລະ ບໍ່ອະນຸຍາດໃຫ້ເຄື່ອນໄຫວກິດຈະການຢ່າງເດັດຂາດ, ຈົນກວ່າຈະປັບປຸງໂຮງງານສຳເລັດ ແລະ ໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ຖືກຕ້ອງຕາມຂໍ້ຕົກລົງເລກທີ່ 1301/ອຄ ຈຶ່ງສາມາດເຄື່ອນໄຫວກິດຈະການໄດ້.

4/. ໃຫ້ສັງລວມບັນຊີໂຮງງານທີ່ຖືກປັບປຸງ ແລະ ໂຮງງານທີ່ຖືກຢຸດເຊົາ ສະເໜີຕໍ່ທ່ານເຈົ້າແຂວງ ເພື່ອໃຫ້ເຈົ້າແຂວງອອກຂໍ້ຕົກລົງ ຫຼື ອອກແຈ້ງການ ຢ່າງເປັນທາງການ ຕໍ່ບັນດາໂຮງງານທີ່ຢູ່ໃນບັນຊີຖືກປັບປຸງ ໃຫ້ຢຸດເຊົາຊົ່ວຄາວ; ແລະ ຕໍ່ໂຮງງານທີ່ຖືກຢຸດເຊົາແຕ່ຍັງເຄື່ອນໄຫວກິດຈະການຢູ່ ໃຫ້ຢຸດເຊົາຖາວອນ ແລະ ໃຫ້ປະກາດເຜີຍແຜ່ຢ່າງກວ້າງຂວາງທາງສື່ມວນຊົນ.

5/. ສຳຫຼັບບັນດາໂຮງງານທີ່ຖືກປັບປຸງ ແຕ່ບໍ່ຢຸດເຊົາຊົ່ວຄາວ, ໂຮງງານທີ່ຖືກຢຸດເຊົາ ແຕ່ຍັງເຄື່ອນໄຫວກິດຈະການ, ລວມທັງໂຮງງານທີ່ເຄື່ອນໄຫວກິດຈະການ ໂດຍບໍ່ມີໃບອະນຸຍາດດຳເນີນກິດຈະການໂຮງງານ. ຖ້າເຫັນວ່າມີການເຄື່ອນໄຫວກິດຈະການ ໃຫ້ຖືວ່າເປັນການລະເມີດຕໍ່ຂໍ້ຕົກລົງວ່າດ້ວຍໂຮງງານ ແລະ ລະເມີດຕໍ່ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແຈ້ງຕໍ່ພະແນກການທີ່ກ່ຽວຂ້ອງ, ອຳນາດການປົກຄອງທ້ອງຖິ່ນ ແລະ ໜ່ວຍສະເພາະກິດຂອງແຂວງ, ນະຄອນຫລວງວຽງຈັນ ເພື່ອພິຈາລະນາປະຕິບັດມາດຕະການຢ່າງເຂັ້ມງວດ ຕາມແຕ່ລະກໍລະນີ ແລະ ກ້າວໄປເຖິງການດຳເນີນຄະດີ ຕາມຂະບວນການຍຸດຕິທຳ.

6/. ໃຫ້ສະຫຼຸບລາຍງານຄືນ ຜົນສຳເລັດຂອງການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ແລ້ວສົ່ງມາຍັງກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນເວລາອັນຄວນ. ເພື່ອສັງລວມລາຍງານຕໍ່ຂັ້ນເທິງໃນໄລຍະຕໍ່ໄປ.

7/. ມອບໃຫ້ກົມອຸດສາຫະກຳ ອອກບົດແນະນຳລະອຽດ ກ່ຽວກັບວິທີ ແລະ ຂັ້ນຕອນການປະຕິບັດຕົວຈິງ ຕາມບົດຮຽນທີ່ໄດ້ເຮັດທົດລອງຢູ່ນະຄອນຫຼວງວຽງຈັນ ແລະ ລົງລົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ບາງແຂວງທີ່ເຫັນວ່າມີຄວາມຈຳເປັນ ເພື່ອຈັດຕັ້ງປະຕິບັດຕົວຈິງ ໃຫ້ສຳເລັດຜົນຕາມລະດັບຄາດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຂ້າງເທິງນີ້ ຢ່າງເຂັ້ມງວດດ້ວຍ.

ລັດຖະມົນຕີ ວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

- ບ່ອນສົ່ງ:

- ຫົວໜ້າ ຄະນະເລຂາທິການລັດຖະບານ (ເພື່ອລາຍງານ).
- ບັນດາລັດຖະມົນຕີຊ່ວຍວ່າການກະຊວງ ອ.ຄ (ເພື່ອຊາບ).
- ຫົວໜ້າຫ້ອງການກະຊວງ ອ.ຄ (ເພື່ອຊາບ).
- ກົມອຸດສາຫະກຳ, ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະສົ່ງອອກ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ).
- ສະມາຄົມອຸດສາຫະກຳ ປຸງແຕ່ງໄມ້ (ເພື່ອຊາບ ແລະ ຕິດຕາມ).